**ມິຊຊາອາທິດທີ 2 ກຳນົດພຣະກຣິສຕະຄົມ**

**ວັນທີ 4 ທັນວາ 2022**



**ພຣະວໍລະສານໂດຍນັກບຸນມັດເທວ 3, 1-12**

ໃນເວລານັ້ນ, ຢວງບັບຕິສຕາໄດ້ປາກົດຕົວເທດສະໜາຢູ່ທີ່ປ່ງວໃນແຂວງຢູດາວ່າ: "ຈົ່ງເປັນທຸກກັບໃຈເຖີດ ຍ້ອນວ່າອານາຈັກສະຫວັນມາຮອດໃກ້ແລ້ວ". ທ່ານຜູ້ນີ້ແລທີ່ປະພາສົກອີຊາຢາໄດ້ກ່າວເຖິງວ່າ ມີສຽງຮ້ອງເຕືອນໃນທີ່ປ່ງວວ່າ: "ຈົ່ງຈັດຕຽມເສັ້ນທາງຂອງພຣະອົງເຈົ້າໃຫ້ຮາບພຽງ".

ຢວງນຸ່ງຫົ່ມດ້ວຍໜັງອູດ, ຮັດແອວດ້ວຍເຊືອກໜັງ, ກິນຕັກແຕນກັບນ້ຳເຜີ້ງປ່າເປັນອາຫານ. ຊາວນະຄອນເຢລູຊາແລມແລະທົ່ວແຂວງຢູດາກັບພວກທີ່ອາໄສຢູ່ຕາມຂົງເຂດແມ່ນ້ຳຢໍແດນໄດ້ພາກັນມາຫາທ່ານ ແລະຮັບພິທີລ້າງຈາກທ່ານໃນແມ່ນ້ຳຢໍແດນ ດ້ວຍສາລະພາບບາບຂອງຕົນ. ເມື່ອເຫັນພວກຟາຣິເຊວແລະພວກຊາດູເຊວມາຮັບພິທີລ້າງທ່ານຈຶ່ງກ່າວວ່າ: ເຊື້ອຊາດງູເຫົ່າເອີຍ! ຜູ້ໃດບອກພວກທ່ານໃຫ້ປົບໜີພຣະພິໂຣດທີ່ຈະມາເຖິງ? ຈົ່ງທຳການໃຊ້ໂທດບາບໃຫ້ເໝາະສົມເຖີດແລະຢ່າອວດອ້າງຕົວວ່າ: ພວກເຮົາມີອາບຣາຮາມເປັນບິດາ. ຂ້າພະເຈົ້າຂໍບອກພວກທ່ານວ່າ ພຣະເປັນເຈົ້າມີລິດສາມາດບັນດານໃຫ້ກ້ອນຫີນເຫລົ່ານີ້ເກີດລູກຫລານໃຫ້ອາບຣາຮາມກໍໄດ້.

ບັດນີ້, ຄົມຂວານໄດ້ຈຸໃສ່ເຫງົ້າໄມ້ແລ້ວ. ຕົ້ນໄມ້ໃດທີ່ບໍ່ເກີດໝາກດີຈະຖືກບັກລົງເຜົາໄຟ. ສ່ວນຂ້າພະເຈົ້ານີ້, ຂ້າພະເຈົ້າຊຳລະລ້າງພວກທ່ານໃນນ້ຳເພື່ອໃຫ້ເປັນທຸກກັບໃຈ. ແຕ່ຜູ້ທີ່ຈະມາພາຍຫລັງຂ້າພະເຈົ້ານັ້ນ ຊົງອຳນາດຍິ່ງໃຫຍ່ກວ່າຂ້າພະເຈົ້າ, ຂ້າພະເຈົ້າເອງບໍ່ສົມຈະແກ້ສາຍເກີບໃຫ້ເພິ່ນຊ້ຳ. ເພິ່ນນັ້ນແລຈະຊຳລະລ້າງພວກທ່ານດ້ວຍພຣະຈິດເຈົ້າແລະໄຟ. ເພິ່ນຖືກະດົ້ງຟັດ, ເພິ່ນຈະຟັດເຂົ້າແລະກວາດລານໃຫ້ສະອາດ. ເພິ່ນຈະຂົນເຂົ້າຂຶ້ນໃສ່ເລົ້າ, ສ່ວນເຟືອງນັ້ນຈະເອົາໄປເຜົາໄຟທີ່ບໍ່ດັບມອດຈັກເທື່ອ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມທ 3, 1-12**

ວັນອາທິດທີ່ຜ່ານມາ, ວາຈາພຣະເຈົ້າໄດ້ເຊື້ອເຊີນພວກເຮົາໃຫ້ຕື່ນເຝົ້າແລະກຽມພ້ອມຢູ່ສະເໝີ. ຍ້ອນໃນເວລາທີ່ພວກເຮົາບໍ່ນຶກບໍ່ຝັນນັ້ນແລ້ວ ພຣະເຈົ້າຈະສະເດັດກັບມາ. ແຕ່ຄຳຖາມທີ່ຕາມມາກໍຄືຕ້ອງຕື່ນເຝົ້າຢ່າງໃດ?

ວາຈາພຣະເຈົ້າວັນອາທິດນີ້ເປັນເໝືອນຄຳຕອບຊ່ວຍພວກເຮົາໃຫ້ເຂົ້າໃຈເຖິງຄວາມໝາຍຂອງການຕື່ນເຝົ້ານັ້ນຄືການຜັນປ່ຽນຊີວິດຂອງຕົນ ຫລືເວົ້າອີກຢ່າງແມ່ນການກັບຈິດປ່ຽນໃຈນັ້ນເອງ. ນັກບຸນມັດເທວຜູ້ຂຽນພຣະວໍລະສານວັນນີ້ໄດ້ຍົກແບບຢ່າງໃຫ້ພວກເຮົາເຫັນການກັບຈິດປ່ຽນໃຈຂອງນັກບຸນຍວງບັບຕິສຕາ. ນັກບຸນຍວງບັບຕິສຕາບໍ່ພຽງແຕ່ເປັນປະພາສົກ, ເປັນຜູ້ປະກາດທີ່ເດີນນຳໜ້າພຣະເຢຊູເຈົ້າເພື່ອຈັດຕຽມເສັ້ນທາງຂອງພຣະອົງໃຫ້ພຽງຮາບເທົ່ານັ້ນ, ແຕ່ທ່ານຍັງປະກາດເຖິງການເປັນທຸກກັບໃຈແລະຊ່ວຍຫລາຍຄົນໃຫ້ຫັນມາຫາພຣະເຈົ້າດ້ວຍການຮັບສິນລ້າງແລະສາລະພາບບາບຂອງຕົນ.

ການກະທຳຂອງບຸນຍວງບັບຕິສຕາເປັນຄຳຖາມສຳລັບພວກເຮົາໃນກຳນົດຕຽມການສະເດັດມາຂອງພຣະເຢຊູເຈົ້າໃນວັນບຸນໂນແອນນີ້ວ່າ: ພວກເຮົາໄດ້ຈັດຕຽມເສັ້ນທາງຊີວິດຂອງພວກເຮົາແລ້ວຫລືບໍ່? ໃນຊີວິດຂອງພວກເຮົາສິ່ງໃດທີ່ຍັງເປັນໂນນສູງກີດຂວາງຄວາມຮັກລະຫວ່າງພວກເຮົາກັບພຣະເຈົ້າ, ແລະລະຫວ່າງພວກເຮົາກັບຄົນອື່ນ? ສິ່ງໃດຍັງເປັນຂຸມທີ່ທຳໃຫ້ພວກເຮົາຕ້ອງສະດຸດລົ້ມແລະຖືກທັບເຕັງຍ້ອນບາບ? ແລະສິ່ງໃດຍັງເປັນອຸປະສັກສຳລັບພວກເຮົາໃນການຫັນມາຫາພຣະເຈົ້າເພື່ອຂໍໂທດນຳພຣະອົງ?

ກຳນົດພຣະກຣິສຕະຄົມຈະມີຄວາມໝາຍ ກໍຕໍ່ເມື່ອພວກເຮົາໄດ້ຄືນດີກັບພຣະເຈົ້າແລະກັບເພື່ອນພີ່ນ້ອງຂອງພວກເຮົາ. ເພາະພຣະເຢຊູກຸມານທີ່ຈະບັງເກີດມານັ້ນ, ພຣະອົງມາເພື່ອນຳສັນຕິສຸກໃຫ້ໂລກ, ເພື່ອນຳຄວາມຍຸດຕິທຳມາໃຫ້ມວນມະນຸດແລະເພື່ອນຳຄວາມຣອດພົ້ນມາໃຫ້ພວກເຮົາ, ພຣະອົງມາເພື່ອຢູ່ນຳພວກເຮົາ. ດັ່ງນັ້ນ, ໃຫ້ພວກເຮົາຫຍັບເຂົ້າຫາພຣະອົງດ້ວຍຄວາມຍິນດີແລະເປີດໃຈເພື່ອຕ້ອນຮັບພຣະອົງ, ຜູ້ເປັນອົງແຫ່ງແອມມານູແອນມາຢູ່ນຳພວກເຮົາ.

**ພາວະນາ**

ໂອພຣະເຢຊູເຈົ້າ, ໂຜດສະເດັດມາເຖີດ. ລູກລໍຖ້າພຣະອົງດັ່ງຄົນຍາມລໍຖ້າຮຸ່ງແຈ້ງ. ຂໍພຣະອົງຈົ່ງນຳສັນຕິສຸກແລະຄວາມຮັກຂອງພຣະອົງລົງມາໃຫ້ລູກ, ໃຫ້ຄອບຄົວຂອງລູກແລະໃຫ້ທຸກຄົນທີ່ລໍຖ້າພຣະອົງດ້ວຍຄວາມຍິນດີເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ